ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ..............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016
ສະຫງວນລິຂະສິດ

ປຶ້ມເຝິກຫັດ

# ໜ່ວຍໂຮງຮຽນຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

## ປຶ້ມຝຶກຫັດ

# ໜ່ວຍໂຮງຮຽນຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລິບ
ຊໍ່ເນັ່ງ ຢັງເນັ່ງຊົງ

ກວດແກ້ໂດຍ: ດຣ. ອ່ອນແກ້ວ ນວນນະວົງ
ປາກຮູນ ຫຼວງໄຊຊະນະ
ເກດ ພັນລັກ

ພິມເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍ ໂຮງຮຽນຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງ ໂຮງຮຽນມີດັ່ງນີ້:

1. ໂຮງຮຽນຂອງຂ້ອຍ.
2. ລະບຽບ ແລະ ການປະຕິບັດຕົນໃນໂຮງຮຽນ.
3. ຫ້ອງໃນໂຮງຮຽນ ແລະ ເຄື່ອງໃຊ້.
4. ເດີ່ນໂຮງຮຽນ, ເຄື່ອງຕ່າງໆ ແລະ ການບົວລະບັດຮັກສາ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍ ໂຮງຮຽນຂອງຂ້ອຍ ເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ ເດັກນ້ອຍໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


ໜ້າ

**1. ຫົວຂໍ້ໜ່ວຍໂຮງຮຽນຂອງຂ້ອຍ...... 1**

**2. ໂຮງຮຽນຂອງຂ້ອຍ ອາທິດທີ 1...... 2**

- ໂຮງຮຽນ ແລະ ຫ້ອງຮຽນ...... 3
- ຄູປະຈຳຫ້ອງ...... 4
- ການປະຕິບັດຕົນ...... 5
- ຄູຫ້ອງຂ້າງຄຽງ...... 6
- ຜູ້ອຳນວຍການ ...... 7
- ແມ່ລ້ຽງ...... 8
- ພະນັກງານອະນາໄມ...... 9

**3. ລະບຽບ ແລະ ການປະຕິບັດຕົນໃນໂຮງຮຽນ ອາທິດທີ 2...... 10**

- ການປະຕິບັດລະບຽບຂອງໂຮງຮຽນ...... 11
- ການເຄົາລົບທຸງຊາດ...... 12
- ກິດຈະກຳໃນໂຮງຮຽນ...... 13
- ກິດຈະກຳໃນໂຮງຮຽນ (ຕໍ່)...... 14
- ການປະຕິບັດຕົນໃນການຮຽນ...... 15
- ການປະຕິບັດຕົນໃນການຫຼິ້ນ...... 16
- ການປະຕິບັດຕົນໃນການພັກຜ່ອນ...... 17

**4. ຫ້ອງໃນໂຮງຮຽນ ແລະ ເຄື່ອງໃຊ້ ອາທິດທີ 3...... 18**

- ຫ້ອງຕ່າງໆໃນໂຮງຮຽນ...... 19
- ຫ້ອງຮຽນ...... 20
- ຫ້ອງຮຽນ (ຕໍ່)...... 21
- ມຸມອ່ານ ຫຼື ຫ້ອງອ່ານ...... 22
- ການບົວລະບັດຮັກສາມຸມອ່ານ ຫຼື ຫ້ອງອ່ານ...... 23
- ຫ້ອງອາຫານ...... 24
- ຄຸນປະໂຫຍດ ແລະ ລະບຽບຂອງຫ້ອງອາຫານ...... 25
- ການບົວລະບັດຮັກສາຫ້ອງອາຫານ...... 26

- ຫ້ອງນ້ຳ........................................................................................................ 27
- ຄຸນປະໂຫຍດຂອງຫ້ອງນ້ຳ.................................................................................. 28
- ການປະຕິບັດລະບຽບ ແລະ ບົວລະບັດຮັກສາຫ້ອງນ........................................... 29
**5. ເດີ່ນໂຮງຮຽນ, ເຄື່ອງຕ່າງໆໃນເດີ່ນ ອາທິດທີ 4.............................................. 30**
- ເດີ່ນໂຮງຮຽນ..................................................................................................... 31
- ການບົວລະບັດຮັກສາເດີ່ນໂຮງຮຽນ..................................................................... 32
- ເຄື່ອງຫຼິ້ນໃນໂຮງຮຽນ.......................................................................................... 33
- ອຸປະກອນຫຼິ້ນນ້ຳ ແລະ ຫຼິ້ນຊາຍ........................................................................... 34
- ເວທີການສະແດງ.............................................................................................. 35
- ການບົດລະບັດຮັກສາເວທີການສະແດງ................................................................. 36

# ໂຮງຮຽນຂອງຂ້ອຍ










**ຫົວຂໍ້ ການຮຽນຂອງແຕ່ລະອາທິດໜ່ວຍໂຮງຮຽນຂອງຂ້ອຍປະກອບມີ:**

1. ໂຮງຮຽນຂອງຂ້ອຍ.
2. ລະບຽບ ແລະ ການປະຕິບັດຕົນໃນໂຮງຮຽນ.
3. ຫ້ອງໃນໂຮງຮຽນ ແລະ ເຄື່ອງໃຊ້.
4. ເດີ່ນໂຮງຮຽນ, ເຄື່ອງຕ່າງໆໃນເດີ່ນ.

# ໂຮງຮຽນຂອງຂ້ອຍ



**ຫົວຂໍ້ ການຮຽນອາທິດທີ 1 ໂຮງຮຽນຂອງຂ້ອຍ:**

1. ໂຮງຮຽນ ແລະ ຫ້ອງຮຽນ.
2. ຄູປະຈຳຫ້ອງ.
3. ຄູຫ້ອງຂ້າງຄຽງ.
4. ຜູ້ອຳນວຍການ.
5. ແມ່ລ້ຽງ ແລະ ພະນັກງານອະນາໄມ.

# ໂຮງຮຽນ ແລະ ຫ້ອງຮຽນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ໂຮງຮຽນຫຼານຊື່ຫຍັງ? ຫຼານຮຽນຫ້ອງໃດ? ໝູ່ເພື່ອນໃນຫ້ອງຮຽນຂອງຫຼານມີໃຜແດ່? ຊື່ວ່າແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ໂຮງຮຽນໜຶ່ງປະກອບມີຊື່ໂຮງຮຽນ, ຊື່ຂັ້ນຮຽນ, ຊື່ຫ້ອງຮຽນຂອງຕົນເອງ, ຊື່ໝູ່ເພື່ອນໃນຫ້ອງຮຽນຂອງຫຼານຊື່ວ່າທ້າວ......... ຫຼື ນາງ..........
- ໃຫ້ເດັກນ້ອຍທາສີຮູບໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຄູປະຈຳຫ້ອງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຄູປະຈຳຫ້ອງ ແລະ ໜ້າທີ່ຮັບຜິດຊອບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ນາຍຄູຂອງຫຼານຊື່ວ່າແນວໃດ? ມີໜ້າທີ່ຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄູປະຈຳຫ້ອງຂອງຫຼານຊື່ວ່າ.........; ມີໜ້າທີ່ຮັບຜິດຊອບເບິ່ງແຍງລ້ຽງດູ ແລະ ນຳພາເດັກນ້ອຍເຄື່ອນໄຫວກິດຈະກຳຕ່າງໆເຊັ່ນ: ຫຼິ້ນ, ກິນ, ນອນ, ຮຽນໜັງສື, ອະນາໄມ, ປະດັບປະດາຫ້ອງ ຮຽນໃຫ້ສວຍງາມ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນຕໍ່ນາຍຄູ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເຂົາເຈົ້າກຳລັງເຮັດຫຍັງ? ຄວນປະຕິບັດຕົນຕໍ່ນາຍຄູແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນຕ້ອງໄປມາລາຄອບ, ເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ; ເວລາໄດ້ຮັບສິ່ງຂອງຕ້ອງກ່າວຄຳວ່າ "ຂອບໃຈ" ທຸກຄັ້ງ, ຊ່ວຍເຫຼືອຄູອະນາໄມຫ້ອງ, ຫິ້ວຂອງຊ່ວຍຄູຕາມຄວາມສາມາດ ແລະ ຊ່ວຍເກັບມ້ຽນເຄື່ອງຮຽນ, ເຄື່ອງໃຊ້ໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ຄູຫ້ອງຂ້າງຄຽງ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຄູຫ້ອງຂ້າງຄຽງ, ໜ້າທີ່ຮັບຜິດຊອບ, ການປະຕິບັດຕົນຕໍ່ຄູຫ້ອງຂ້າງຄຽງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄູຫ້ອງຂ້າງຄຽງຊື່ວ່າແນວໃດ? ໜ້າທີ່ຂອງລາວເຮັດຫຍັງ? ຫຼານຄວນປະຕິບັດຕົນແນວໃດຕໍ່ຄູຜູ້ນັ້ນ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄູຫ້ອງຂ້າງຄຽງຊື່........; ມີໜ້າທີ່ຮັບຜິດຊອບເບິ່ງແຍງລ້ຽງດູ ແລະ ນຳພາເດັກນ້ອຍເຄື່ອນ ໄຫວກິດຈະກຳຕ່າງໆເຊັ່ນ: ຫຼິ້ນ, ກິນ, ນອນ, ຮຽນໜັງສື, ອະນາໄມ, ປະດັບປະດາຫ້ອງຮຽນໃຫ້ສວຍງາມ; ການປະຕິບັດຕົນຕ້ອງເວົ້າຈາສຸພາບ ຂານຕອບ ໂດຍ, ເຈົ້າ; ຍໍມືນົບຖາມສະບາຍດີ; ເວລາໄດ້ຮັບສິ່ງຂອງຕ້ອງກ່າວຄຳວ່າ "ຂອບໃຈ".
- ໃຫ້ເດັກນ້ອຍທາສີຮູບຄົນ ແລະ ໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຜູ້ອຳນວຍການ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຜູ້ອຳນວຍການ, ໜ້າທີ່ຮັບຊອບຂອງຜູ້ອຳນວຍການ ແລະ ການປະຕິບັດຕົນຕໍ່ຜູ້ອຳນວຍການ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຜູ້ອຳນວຍ ການມີໜ້າທີ່ຫຍັງແດ່? ຫຼານຄວນປະຕິບັດຕົນແນວໃດຕໍ່ຜູ້ອຳນວຍການ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຜູ້ອຳນວຍການໂຮງຮຽນຂອງຫຼານຊື່.....; ໜ້າທີ່ຮັບຜິດຊອບແມ່ນເຮັດວຽກຫ້ອງການ, ນຳພາ ແລະ ຊ່ວຍເຫຼືອນາຍຄູທຸກຄົນໃນໂຮງຮຽນ; ການປະຕິບັດຕົນຕໍ່ຜູ້ອຳນວຍການຕ້ອງເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ, ແນະນຳໃຊ້ແທນຊື່ຕົນເອງດ້ວຍຄຳວ່າ ຂ້ານ້ອຍ, ລູກ, ຫຼານ, ເວລາໄດ້ຮັບສິ່ງຂອງຕ້ອງກ່າວຄຳວ່າ "ຂອບໃຈ "ທຸກຄັ້ງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ແມ່ລ້ຽງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່, ໜ້າທີ່ຮັບຜິດຊອບຂອງແມ່ລ້ຽງ, ການປະຕິບັດຕົນຕໍ່ແມ່ລ້ຽງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄົນແຕ່ງອາຫານໃນໂຮງຮຽນຫຼານເອີ້ນວ່າແນວໃດ? ມີໜ້າທີ່ຮັບຜິດຊອບຫຍັງ? ຄວນປະຕິບັດຕົນແນວໃດຕໍ່ແມ່ລ້ຽງ.
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ແມ່ລ້ຽງຊື່.... ມີໜ້າທີ່ຮັບຜິດຊອບແມ່ນແຕ່ງອາຫານໃຫ້ເດັກກິນ, ຈັດມ້ຽນເຄື່ອງໃຊ້ໃນເຮືອນຄົວໃຫ້ເປັນລະບຽບ; ການປະຕິບັດຕົນເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ, ແນະນໍາໃຊ້ແທນຊື່ຕົນເອງດ້ວຍຄໍາວ່າ ຂ້ານ້ອຍ, ຫຼານ, ລູກ, ເວລາໄດ້ຮັບສິ່ງຂອງກ່າວຄໍາວ່າຂອບໃຈທຸກຄັ້ງ.
- ໃຫ້ເດັກນ້ອຍທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ພະນັກງານອະນາໄມ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ພະນັກງານອະນາໄມ, ໜ້າທີ່ຮັບຊອບ, ການປະຕິບັດຕົນຕໍ່ພະນັກງານອະນາໄມ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄົນຜູ້ປັດກວາດຂີ້ເຫຍື້ອໃນເດີ່ນໂຮງຮຽນແມ່ນໃຜ? ມີໜ້າທີ່ຮັບຜິດຊອບຫຍັງ? ຄວນປະຕິບັດຕົນຕໍ່ພະນັກງານອະນາໄມແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ພະນັກງານອະນາໄມຊື່...; ມີໜ້າທີ່ຮັບຜິດຊອບປັດກວາດບໍລິເວນໂຮງຮຽນໃຫ້ສະອາດ, ປູກ ແລະ ບົວລະບັດຕົ້ນດອກໄມ້ໃຫ້ສວຍງາມ; ການປະຕິບັດຕົນຕໍ່ພະນັກງານອະນາໄມ ຕ້ອງເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ, ແນະນຳໃຊ້ແທນຊື່ຕົນເອງດ້ວຍຄຳວ່າ ຂ້ານ້ອຍ, ຫຼານ, ລູກ, ເວລາໄດ້ຮັບສິ່ງຂອງກ່າວຄຳວ່າຂອບໃຈທຸກຄັ້ງ.
- ໃຫ້ເດັກນ້ອຍທາສີຮູບຄົນ, ໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ລະບຽບ ແລະ ການປະຕິບັດຕົນໃນໂຮງຮຽນ



**ຫົວຂໍ້ການຮຽນອາທິດທີ 2 ລະບຽບ ແລະ ການປະຕິບັດຕົນໃນໂຮງຮຽນ:**

1. ການປະຕິບັດຕົນລະບຽບຂອງໂຮງຮຽນ.
2. ການເຄົາລົບທຸງຊາດ.
3. ກິດຈະກຳໃນໂຮງຮຽນ.
4. ກິດຈະກຳໃນໂຮງຮຽນ (ຕໍ່).
5. ການປະຕິບັດຕົນໃນໂຮງຮຽນ.

# ການປະຕິບັດລະບຽບຂອງໂຮງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດລະບຽບຂອງໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານນຸ່ງເຄື່ອງແນວໃດມາໂຮງຮຽນ? ຫຼານຄວນປະຕິບັດໂມງເວລາໃນການມາໂຮງຮຽນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດລະບຽບຂອງໂຮງຮຽນຕ້ອງນຸ່ງເຄື່ອງເປັນລະບຽບຕາມມື້ທີ່ໂຮງຮຽນກຳນົດ; ມາໂຮງຮຽນ ແລະ ກັບບ້ານໃຫ້ຖືກຕ້ອງຕາມເວລາທີ່ທາງໂຮງຮຽນກຳນົດໄວ້.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ເຮືອນ ໂດຍນຳໃຊ້ສີຕາມໃຈ.

# ການເຄົາລົບທຸງຊາດ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກທຸງຊາດ, ລະບຽບໃນການເຄົາລົບທຸງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ທຸງຊາດມີຂະໜາດ, ຮູບຮ່າງ, ສີແນວໃດ? ເວລາເຄົາລົບທຸງຫຼານເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ທຸງຊາດມີຮູບຮ່າງເປັນຮູບສີ່ແຈສາກ, ຂະໜາດນ້ອຍ-ໃຫຍ່, ສີແດງ, ສີຟ້າ, ສີຂາວ; ການປະຕິບັດລະບຽບໃນການ ເຄົາລົບທຸງຊາດຕ້ອງຢືນລຽນແຖວຕາມລຳດັບ, ບໍ່ໃສ່ໝວກ, ບໍ່ເອົາຜ້າປົກຫົວ, ເມື່ອໄດ້ຍິນສຽງເພງຊາດລາວໃຫ້ຢືນກົງຢູ່ກັບທີ່, ບໍ່ຢອກ ແລະ ບໍ່ລົມກັນ; ເມື່ອສຽງເພງຈົບໃຫ້ກົ້ມຫົວລົງເພື່ອຄຳນັບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ, ນາຍຄູ ໂດຍນຳໃຊ້ສີຕາມໃຈ ແລະ ທາສີທຸງຊາດຕາມແບບ.

# ກິດຈະກຳໃນໂຮງຮຽນ










**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກກິດຈະກຳຂອງໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໂຮງຮຽນຫຼານໄດ້ເຮັດກິດຈະກຳແບບນີ້ບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ກິດຈະກຳຂອງໂຮງຮຽນປະກອບມີການໄປທັດສະນະສຶກສາໄປເບິ່ງສະຖານທີ່ສຳຄັນ, ສວນສັດ, ພິພິດຕະພັນ; ແຂ່ງຂັນຮ້ອງເພງ, ຟ້ອນລວມໝູ່, ດ່ຽວ, ຫຼິ້ນກິລາເຕະບານ, ຮັບບານ, ໂຍນບານ; ອອກແຮງງານ: ປັດກວດຫ້ອງຮຽນ, ປູກ ແລະ ຫົດນ້ຳຕົ້ນໄມ້, ເກັບຂີ້ເຫຍື້ອໃນເດີ່ນໂຮງຮຽນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ກິດຈະກໍາໃນໂຮງຮຽນ (ຕໍ່)







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກໍາລັງເຮັດຫຍັງ? ຫຼານຄວນປະຕິບັດຕົນແນວໃດໃນໂຮງຮຽນ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນໂຮງຮຽນປະກອບມີການຮຽນ, ການຫຼິ້ນ, ການພັກຜ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນໍາໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເວລາຮຽນຫຼານຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການຮຽນບໍ່ບົນແຊວ, ຕັ້ງໃຈຟັງຄູເວົ້າ, ບໍ່ຢອກໝູ່ໃນເວລາຮຽນ, ແບ່ງປັນເຄື່ອງໃຊ້ ແລະ ຊ່ວຍເຫຼືອໝູ່ໃນເວລາເຮັດກິດຈະກຳຕ່າງໆ ແລະ ຍອມຮັບຟັງຄຳຄິດຄຳເຫັນຂອງໝູ່ເພື່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຫຼິ້ນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຫຼິ້ນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງແດ່? ເວລາຫຼິ້ນຫຼາຍຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການຫຼິ້ນຄວນແບ່ງປັນເຄື່ອງຫຼິ້ນໃຫ້ໝູ່, ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ຫຼິ້ນຖືກວິທີ, ບໍ່ມ້າງເພ, ເກັບມ້ຽນເຄື່ອງຫຼິ້ນໃຫ້ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການພັກຜ່ອນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການພັກຜ່ອນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນປະຕິບັດຕົນໃນການພັກຜ່ອນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການພັກຜ່ອນ ເວລາພັກຜ່ອນບໍ່ລົມ ແລະ ບໍ່ຢອກກັນ; ນອນພັກຜ່ອນ ແລະ ຕື່ນຖືກເວລາ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງໃນໂຮງຮຽນ ແລະ ເຄື່ອງໃຊ້










**ຫົວຂໍ້ການຮຽນອາທິດທີ 3 ຫ້ອງໃນໂຮງຮຽນ ແລະ ເຄື່ອງໃຊ້:**

1. ຫ້ອງຕ່າງໆໃນໂຮງຮຽນ.
2. ຫ້ອງຮຽນ.
3. ມຸມອ່ານ ຫຼື ຫ້ອງອ່ານ.
4. ຫ້ອງອາຫານ.
5. ຫ້ອງນ້ຳ.

# ຫ້ອງຕ່າງໆໃນໂຮງຮຽນ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ຫ້ອງຕ່າງໆໃນໂຮງຮຽນ, ຂະໜາດ, ສີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫ້ອງຮຽນຂອງຫຼານເປັນຫ້ອງນ້ອຍ ຫຼື ຫ້ອງໃຫຍ່? ໂຮງຮຽນຂອງຫຼານທາດ້ວຍສີຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຫ້ອງຕ່າງໆໃນໂຮງຮຽນປະກອບມີຫ້ອງຮຽນ, ຫ້ອງອ່ານ ຫຼື ມຸມອ່ານ, ຫ້ອງອາຫານ, ຫ້ອງນ້ຳ.
- ໃຫ້ເດັກນ້ອຍທາສີຮູບຫ້ອງຕ່າງໆໃນໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງຮຽນ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຄື່ອງໃຊ້ ແລະ ຄຸນປະໂຫຍດຂອງຫ້ອງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງຮຽນຫຼານມີຫຍັງແດ່? ຫ້ອງຮຽນໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງຮຽນມີໂຕະ, ຕັ່ງ, ຕູ້, ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມບົດເຝິກຫັດ, ປຶ້ມນິທານ, ສໍດຳ, ສໍສີ, ບູ໋ອກ, ມຸມ ແລະ ອຸປະກອນໃນມຸມຮຽນຮູ້ຕ່າງໆ; ຄຸນປະໂຫຍດຂອງຫ້ອງຮຽນເປັນບ່ອນທີ່ເດັກ, ຄູຮ່ວມກັນປະຕິບັດກິດຈະກຳການຫຼິ້ນ, ຮຽນຮູ້ຕ່າງໆໃນແຕ່ລະວັນ ແລະ ເປັນບ່ອນເດັກນອນພັກຜ່ອນຕອນທ່ຽງ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໃນຫ້ອງ ແລະ ຄົນ ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາຫ້ອງຮຽນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການບົວລະບັດຮັກສາຫ້ອງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຄວນບົວລະບັດຮັກສາຫ້ອງຮຽນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການບົວລະບັດຮັກສາຖິ້ມຂີ້ເຫຍື້ອໃສ່ກະຖັງ, ເຊັດ, ຖູ, ກວາດຫ້ອງໃຫ້ສະອາດ, ເກັບມ້ຽນເຄື່ອງໃຊ້ຕ່າງໆໃຫ້ຖືກບ່ອນ ແລະ ເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ໂຕະ, ຕັ່ງ ໂດຍນຳໃຊ້ສີຕາມໃຈ.

# ມຸມອ່ານ ຫຼື ຫ້ອງອ່ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້, ຄຸນປະໂຫຍດໃນມຸມອ່ານ ຫຼື ຫ້ອງອ່ານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຄື່ອງໃຊ້ໃນຫ້ອງອ່ານມີຫຍັງແດ່? ຫ້ອງອ່ານໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ມຸມອ່ານ ຫຼື ຫ້ອງອ່ານມີໂຕະ, ຕັ່ງ, ປຶ້ມນິທານ, ປຶ້ມຮູບພາບຕ່າງໆ; ຄຸນປະໂຫຍດຂອງຫ້ອງອ່ານເປັນບ່ອນຮຽນຮູ້ຈາກການອ່ານປຶ້ມນິທານ ແລະ ປຶ້ມຮູບພາບຕ່າງໆ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາມຸມອ່ານ ຫຼື ຫ້ອງອ່ານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລະບຽບຂອງຫ້ອງອ່ານ ແລະ ການບົວລະບັດຮັກສາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເວລາເຂົ້າຫ້ອງອ່ານຄວນປະຕິບັດລະບຽບແນວໃດ? ຄວນບົວລະບັດຮັກສາປຶ້ມອ່ານແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລະບຽບຂອງຫ້ອງອ່ານເວລາເຂົ້າຫ້ອງອ່ານ ອ່ານປຶ້ມນິທານ, ປຶ້ມຮູບພາບບໍ່ລົມກັນ, ຕັ້ງໃຈອ່ານ, ເບິ່ງປຶ້ມຂອງຕົນເອງບໍ່ຢອກໝູ່; ການບົວລະບັດຮັກສາຄ່ອຍເປີດປຶ້ມ, ລະວັງບໍ່ໃຫ້ຂາດ, ຫຼັງຈາກອ່ານ ຫຼື ເບິ່ງແລ້ວເກັບປຶ້ມມ້ຽນໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ເຄື່ອງໃຊ້ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້ໃນຫ້ອງອາຫານ; ເຝິກທັກສະການເວົ້າ ແລະທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫ້ອງອາຫານມີເຄື່ອງໃຊ້ຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງອາຫານມີໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ, ຕຸກນ້ຳດື່ມ ແລະ ອື່ນໆ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ ໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດ ແລະ ລະບຽບຂອງຫ້ອງອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດ ແລະ ລະບຽບຂອງຫ້ອງອາຫານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫ້ອງອາຫານໃຊ້ໄວ້ເຮັດຫຍັງ? ເວລາກິນອາຫານ ຫຼານຄວນປະຕິບັດຕົນແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງຫ້ອງອາຫານເປັນບ່ອນສຳລັບເດັກກິນເຂົ້າຮ່ວມກັນ; ລະບຽບໃນຫ້ອງອາຫານເຂົ້າຫ້ອງອາຫານໃຫ້ຖືກຕາມເວລາ, ນັ່ງໃຫ້ຖືກບ່ອນ, ກິນອາຫານບໍ່ໃຫ້ມີສຽງດັງ, ບໍ່ຍາດກິນຂອງໝູ່, ບໍ່ບິນແຊວ, ບໍ່ຢອກໝູ່, ຖິ້ມຂີ້ເຫຍື້ອ ແລະ ເສດອາຫານໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາຫ້ອງອາຫານ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການບົວລະບັດຮັກສາຫ້ອງອາຫານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງແດ່? ການບົວລະບັດຮັກສາຫ້ອງອາຫານຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການບົວລະບັດຮັກສາຕ້ອງໝັ່ນລ້າງຖ້ວຍ, ບ່ວງ, ຈອກໃຫ້ສະອາດ, ເກັບມ້ຽນໃຫ້ຖືກບ່ອນ, ເຊັດຖູໂຕະ, ຕັ່ງໃຫ້ສະອາດ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ຫ້ອງນ້ຳ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງໃຊ້ໃນຫ້ອງນ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງໃຊ້ໃນຫ້ອງນ້ຳມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງໃຊ້ໃນຫ້ອງນ້ຳມີຄຸ, ໂອ, ສະບູ, ຢາຖູແຂ້ວ, ຟອຍຖູແຂ້ວ, ນ້ຳຢາ ແລະ ຟອຍຖູພື້ນ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງໃຊ້ໃນຫ້ອງນ້ຳ ໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງຫ້ອງນ້ຳ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງຫ້ອງນ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກຳລັງເຮັດຫຍັງ? ຫ້ອງນ້ຳໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງຫ້ອງນ້ຳເປັນບ່ອນອາບນ້ຳ, ລ້າງໜ້າ, ຖູແຂ້ວ, ຖ່າຍໜັກ ແລະ ຖ່າຍເບົາ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງນ້ຳ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດລະບຽບໃນການເຂົ້າຫ້ອງນ້ຳ, ການບົວລະບັດຮັກສາຫ້ອງນ້ຳ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໃນເວລາເຂົ້າຫ້ອງນ້ຳຄວນປະຕິບັດຕົນແນວໃດ? ຄວນບົວລະບັດຮັກສາຫ້ອງນ້ຳແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດກົດລະບຽບໃນການເຂົ້າຫ້ອງນ້ຳ ຕ້ອງເຂົ້າຫ້ອງນ້ຳເທື່ອລະຄົນ, ກ່ອນຈະຖ່າຍໜັກຖອກນ້ຳໃສ່ທົ່ວວິດກ່ອນ, ຖ່າຍແລ້ວເຊັດ ຫຼື ລ້າງກົ້ນໃຫ້ສະອາດ ແລະ ປິດກ໊ອກນ້ຳ ທຸກຄັ້ງກ່ອນອອກຈາກຫ້ອງນ້ຳ; ການບົວລະບັດຮັກສາໝັ່ນລ້າງທົ່ວວິດ ຫຼື ຊັກໂຄກໃຫ້ສະອາດ, ຖູພື້ນ, ເກັບມ້ຽນເຄື່ອງໃຊ້ເປັນລະບຽບ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເດີ່ນໂຮງຮຽນ, ເຄື່ອງຕ່າງໆໃນເດີ່ນ



**ຫົວຂໍ້ການຮຽນອາທິດທີ 4 ເດີ່ນໂຮງຮຽນ, ເຄື່ອງຕ່າງໆໃນເດີ່ນ:**

1. ເດີ່ນໂຮງຮຽນ.
2. ເຄື່ອງຫຼິ້ນໃນເດີ່ນ.
3. ອຸປະກອນຫຼິ້ນນ້ຳ ແລະ ຫຼິ້ນຊາຍ.
4. ເວທີການສະແດງ.

# ເດີ່ນໂຮງຮຽນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງຕ່າງໆໃນເດີ່ນໂຮງຮຽນ, ລັກສະນະ ແລະ ຄຸນປະໂຫຍດຂອງເດີ່ນໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເດີ່ນໂຮງຮຽນຂອງຫຼານມີເຄື່ອງຫຼິ້ນຫຍັງແດ່? ເດີ່ນໂຮງຮຽນໃຊ້ໄວ້ເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງຕ່າງໆໃນໂຮງຮຽນມີຫ້ອງຮຽນ, ເດີ່ນຫຼິ້ນ, ເຄື່ອງຫຼິ້ນ, ຮົ້ວ, ສວນດອກໄມ້, ຕົ້ນໄມ້; ຄຸນປະໂຫຍດຂອງໂຮງຮຽນເປັນບ່ອນໃຫ້ເດັກຫຼິ້ນ ແລະ ເຄື່ອນໄຫວກິດຈະກຳນອກຫ້ອງຮຽນ; ລັກສະນະຂອງເດີ່ນໂຮງຮຽນມີເດີ່ນນ້ອຍ, ເດີ່ນໃຫຍ່, ເດີ່ນສັ້ນ ແລະ ຍາວ.
- ໃຫ້ເດັກນ້ອຍທາສີຮູບໂຮງຮຽນ ແລະ ເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການບົວລະບັດຮັກສາເດີ່ນໂຮງຮຽນ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການບົວລະບັດຮັກສາເດີ່ນໂຮງຮຽນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍບົວລະບັດຮັກສາເດີ່ນໂຮງຮຽນແນວນີ້ບໍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຖິ້ມຂີ້ເຫຍື້ອໃສ່ກະຖັງ ຫຼື ກະຕ່າ, ຫົດນ້ຳຕົ້ນດອກໄມ້, ປັດກວາດເດີ່ນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ແລະ ໂຮງຮຽນ ໂດຍນຳໃຊ້ສີຕາມໃຈ.

# ເຄື່ອງຫຼິ້ນໃນເດີ່ນ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກເຄື່ອງຫຼິ້ນໃນເດີ່ນໂຮງຮຽນ, ຄຸນປະໂຫຍດ, ການບົວລະບັດຮັກສາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໂຮງຮຽນຫຼານມີເຄື່ອງຫຼິ້ນຫຍັງແດ່? ໃຊ້ໄວ້ເຮັດຫຍັງ? ຄວນບົວລະບັດຮັກສາແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ເຄື່ອງຫຼິ້ນມີມ້າໝູນ, ຮາວໂຫນ, ຕໍ່ຕ່າງລະດັບ, ຂອນໄມ້; ຄຸນປະໂຫຍດ ມ້າໝູນ (ປີ່ນໄປ, ມາເຮັດໃຫ້ຮ່າງກາຍຊົງຕົວ); ຮາວໂຫນ (ແຂວນ ຫຼື ໂຫນ ຊ່ວຍໃຫ້ກ້າມຊີ້ນແຂງແຮງ); ຕໍ່ຕ່າງລະດັບ ແລະ ຂອນໄມ້ (ໄຕ່ໄປ, ມາ ຊ່ວຍໃຫ້ຮ່າງກາຍຊົງຕົວ ແລະ ກ້າມຊີ້ນແຂງແຮງ); ການບົວລະບັດຮັກສາ: ຫຼິ້ນຖືກວິທີ, ປະຕິບັດຕາມຄຳແນະນຳ, ຄ່ອຍຫຼິ້ນ, ຫຼັງຈາກຫຼິ້ນແລ້ວ ອະນາໄມສະຖານທີ່ໃຫ້ສະອາດ.
- ໃຫ້ເດັກນ້ອຍທາສີຮູບເຄື່ອງຫຼິ້ນ ໂດຍນຳໃຊ້ສີຕາມໃຈ.

# ອຸປະກອນຫຼິ້ນນ້ຳ ແລະ ຫຼິ້ນຊາຍ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ອຸປະກອນການຫຼິ້ນນ້ຳ, ຫຼິ້ນຊາຍ, ຄຸນປະໂຫຍດ, ການບົວລະບັດຮັກສາ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີອຸປະກອນຫຍັງແດ່? ໃຊ້ໄວ້ເຮັດຫຍັງ? ເວລາໃຊ້ແລ້ວຄວນບົວລະບັດຮັກສາແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ອຸປະກອນມີ ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂິງ, ນ້ຳ ແລະ ຊາຍ; ຄຸນປະໂຫຍດຫຼິ້ນຊ່ວຍໃຫ້ກ້າມຊີ້ນແຂງແຮງ, ພັດທະນາຄວາມຄິດສ້າງສັນ ແລະ ມ່ວນຊື່ນ; ການບົວລະບັດຮັກສາລ້າງອຸປະກອນໃຫ້ສະອາດ, ຕາກໃຫ້ແຫ້ງ, ປົກປັກຮັກສາບໍ່ໃຫ້ເສຍຫາຍ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ເວທີການສະແດງ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງເວທີສະແດງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກໍາລັງເຮັດຫຍັງ? ເວທີການ ສະແດງມີຄຸນປະໂຫຍດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງເວທີການສະແດງເປັນບ່ອນສະແດງສິລະປະວັນນະຄະດີ, ຈັດກິດຈະກໍາຕ່າງໆພາຍໃນໂຮງຮຽນ.
- ໃຫ້ເດັກນ້ອຍທາສີຮູບເດັກນ້ອຍ ໂດຍນໍາໃຊ້ສີຕາມໃຈ.

# ການບົວລະບັດຮັກສາເວທີການສະແດງ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການບົວລະບັດຮັກສາຮັກສາເວທີສະແດງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຄວນບົວລະບັດຮັກສາເວທີສະແດງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການບົວລະບັດຮັກສາເວທີສະແດງຕ້ອງຊ່ວຍຄູປັດກວາດເຊັດຖູ; ບໍ່ຂີດຂຽນ ຫຼື ແຕ້ມທົ່ວທີບ ໃສ່ເວທີສະແດງ; ຖິ້ມຂີ້ເຫຍື້ອໃສ່ກະຖັງ ຫຼື ກະຕ່າ ແລະ ບໍ່ໄປຫຼິ້ນ ຫຼື ໂຕນເວທີສະແດງຕາມລໍາພັງ.
- ໃຫ້ເດັກນ້ອຍທາສີຮູບຄືນ ໂດຍນໍາໃຊ້ສີຕາມໃຈ.